ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0923 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 18 ມິຖຸນາ 2020

# ລະບຽບ ແລະ ຂໍ້ຫ້າມ ຕໍ່ຜູ້ເຂົ້າສອບເສັງ

## I. ລະບຽບ.

1. **ຜູ້ຊາຍ:** ນຸ່ງເສື້ອແຂນສັ້ນ ຫຼື ແຂນຍາວສີຂາວ, ນຸ່ງໂສ້ງຂາຍາວສີດຳ ຫຼື ສີຟ້າ, ເກີບຄັດມັນສີດຳ ຫຼື ສີນ້ຳຕານ;
2. **ແມ່ຍິງ:** ນຸ່ງເສື້ອແຂນສັ້ນ ຫຼື ແຂນຍາວສີຂາວ, ນຸ່ງສິ້ນສີດາ ຫຼື ສີຟ້າ, ໃສ່ເກີບຮັດສົ້ນ ບໍ່ແມ່ນສົ້ນສູງເກີນໄປ;
3. **ກະກຽມ:** ບິກ, ສໍດຳ ແລະ ບັດເຂົ້າຫ້ອງສອບເສັງ;
4. ພາຍຫຼັງສອບເສັງ ແລະ ສຳພາດ ຖືກບັນຈຸເຂົ້າເປັນລັດຖະກອນໃໝ່ ຂອງກະຊວງການເງິນ ຕ້ອງໄດ້ໄປປະຈຳການຕາມການບັນຈຸ ແລະ ສັບຊ້ອນຂອງກະຊວງການເງິນ, ຖ້າຫາກຜູ້ໃດບໍ່ສາມາດໄປປະຈຳການຕາມການບັນຈຸ ແລະ ສັບຊ້ອນຂອງກະຊວງການເງິນ ຖືວ່າສະຫຼະສິດ ແລະ ຈະໄດ້ຄົ້ນຄວ້າຄັດເລືອກເອົາຜູ້ທີ່ມີເງື່ອນໄຂຄົບຖ້ວນທີ່ມີຄະແນນຖັດລົງມາ ເພື່ອປ່ຽນແທນຕາມລຳດັບ.

## II. ຂໍ້ຫ້າມ.

1. ຫ້າມນັກສອບເສັງໃຊ້ສຽງດັງໃນເວລາສອບເສັງ;
2. ບໍ່ອະນຸຍາດໃຫ້ນັກສອບເສັງນຳເຄື່ອງເອເລັກໂຕຼນິກ ທຸກປະເພດເຂົ້າໃນການສອບເສັງ;
3. ຫ້າມນັກສອບເສັງໃຫ້ຄົນອື່ນກ່າຍ ຫຼື ກ່າຍຄົນອື່ນໃນເວລາສອບເສັງ;
4. ຫ້າມນັກສອບເສັງນຳເອົາເອກະສານທຸກປະເພດ ທີ່ກ່ຽວຂ້ອງກັບການສອບເສັງເຂົ້າຫ້ອງສອບເສັງ;
5. ຫ້າມນັກສອບເສັງອອກຫ້ອງສອບເສັງ ໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະຮັບຜິດຊອບຍາມສອບເສັງ;
6. ຫ້າມນັກສອບເສັງຍ້ອມຜົມສີແດງ, ທອງ ແລະ ອື່ນໆ ຍົກເວັ້ນແຕ່ຍ້ອມຜົມສີດຳ.

ຫົວໜ້າກົມ

ກະຊວງການເງິນ

ກົມຈັດຕັ້ງແລະພະນັກງານ

ສິດທິສອນ ເທບພາສີ